COUNT US IN 2020

There's Power In Being Counted

ASIAN AMERICANS ADVANCING JUSTICE

COUNTUSIN2020.ORG

# ການຮັກສາຄວາມລັບກ່ຽວກັບການສຳຫຼວດພົນລະເມືອງ

*ມີຄຳຖາມບໍ? ໂທຫາເບີສາຍດ່ວນການສຳຫຼວດສຳມະໂນຄົວຂອງພວກເຮົາໄດ້ທີ່ເບີ 844-2020-API ສຳລັບພາສາອັງກິດ ແລະ ພາສາອື່ນໆ. ສຳລັບຂໍ້ມູນເພີ່ມເຕີມ, ເຂົ້າເບິ່ງເວັບໄຊທ໌ www.CountUsIn2020.org/hotline*

ການສຳຫລວດພົນລະເມືອງແມ່ນນັບເອົາໝົດທຸກຄົນທີ່ອາໄສຢູ່ໃນສະຫະລັດອາເມລິກາ.

- **ການນັບໃນການສຳຫຼວດພົນລະເມືອງສົ່ງຜົນວ່າຈະມີການສະໜອງເງິນທຶນຫຼາຍປານໃດໃຫ້ແກ່ໂຮງຮຽນຕ່າງໆ, ສູນສຸຂະພາບ ແລະ ການບໍລິການທີ່ສຳຄັນອື່ນໆໃນເຂດພື້ນທີ່ຂອງທ່ານ -- ນັບໄດ້ຫຼາຍຄົນໃນຊຸມຊົນຂອງທ່ານຫຼາຍເທົ່າໃດ ຊຸມຊົນຂອງທ່ານກໍ່ຈະໄດ້ຮັບງົບປະມານຫຼາຍເທົ່ານັ້ນ.**
- ***ເມື່ອທ່ານໄດ້ສຳ ຫຼວດພົນລະເມືອງ, ທ່ານຊ່ວຍໃຫ້ແນ່ໃຈວ່າ ຄອບຄົວ ແລະ ຊຸມຊົນຂອງທ່ານໄດ້ຮັບການແບ່ງປັນເງິນທຶນ, ການບໍລິການ ແລະ ການເປັນຕົວແທນທາງການເມືອງຢ່າງເປັນທຳ!***

ການສຳຫຼວດພົນລະເມືອງ ຈະສອບຖາມຄຳຖາມພື້ນຖານ ເຊັ່ນ: ອາຍຸ, ຊື່, ເຊື້ອຊາດ ແລະ ຊົນເຜົ່າ ກ່ຽວກັບແຕ່ລະບຸກຄົນທີ່ອາໄສຢູ່ໃນຄົວເຮືອນຂອງທ່ານ. **ການສຳຫຼວດພົນລະເມືອງປີ 2020 ຈະ *<u>ບໍ່</u>* ສອບຖາມກ່ຽວກັບການເຂົ້າເມືອງ ຫຼື ຄວາມເປັນພົນລະເມືອງ.**

## ຄຳຕອບແບບສຳຫຼວດຂອງທ່ານຈະຖືກເກັບຮັກສາເປັນຄວາມລັບທັງໝົດ.

- ❖ ກົດໝາຍທີ່ເຄັ່ງຄັດຮັດກຸມປົກປ້ອງການເກັບຮັກສາເປັນຄວາມລັບຄຳຕອບແບບສຳຫຼວດພົນລະເມືອງ ຂອງທ່ານ.
- ❖ ສຳນັກງານສຳຫຼວດພົນລະເມືອງ (Census Bureau) ບໍ່ອະນຸຍາດໃຫ້ແບ່ງປັນຂໍ້ມູນສ່ວນຕົວຂອງທ່ານກັບຜູ້ໃດຜູ້ໜຶ່ງ ລວມມີອົງການບັງຄັບໃຊ້ກົດໝາຍກ່ຽວກັບການເຂົ້າເມືອງ ແລະ ພາສີ (ICE), ເຈົ້າໜ້າທີ່ຕຳຫຼວດ ຫຼື ອົງການອື່ນໆຂອງລັດຖະບານ.
- ❖ ສຳນັກງານສຳຫຼວດພົນລະເມືອງ ສາມາດນຳໃຊ້ຄຳຕອບຂອງທ່ານໄດ້ເພື່ອສ້າງຂໍ້ມູນທົ່ວໄປກ່ຽວກັບປະຊາກອນເທົ່ານັ້ນ ເຊັ່ນ: ມີຈັກຄົນທີ່ອາໄສຢູ່ໃນເມືອງຂອງທ່ານ ແລະ ສະຖິຕິກ່ຽວກັບອາຍຸ, ບົດບາດທາງເພດ ແລະ ເຊື້ອຊາດ. ສຳນັກງານສຳຫຼວດພົນລະເມືອງບໍ່ສາມາດແບ່ງປັນຂໍ້ມູນກ່ຽວກັບທ່ານໃນຖານະເປັນລາຍບຸກຄົນໄດ້.

ກົດໝາຍກຳນົດໃຫ້ທຸກໆຄົນຕ້ອງໄດ້ຕອບການສຳຫຼວດພົນລະເມືອງໃຫ້ສຳເລັດ ແລະ ຕອບຄຳຖາມທັງໝົດຕາມຄວາມຈິງ. ຫ້າມຕົວະໃນການສຳຫຼວດພົນລະເມືອງ.

ໃນກໍລະນີທີ່ທ່ານຂ້າມຄຳຖາມໃດໜຶ່ງ ຫຼື ສອງຄຳຖາມ, ແບບຟອມຂອງທ່ານຍັງຈະຖືກນັບ ຕາມໃດທີ່ທ່ານໄດ້ສະໜອງຊື່ ແລະ ທີ່ຢູ່ຂອງທ່ານ. ໃນກໍລະນີທີ່ທ່ານຂ້າມຄຳຖາມ ຫຼື ບໍ່ຕອບຄຳຖາມສະຫຼວດທັງຫມົດ,ສຳນັກງານສຳຫຼວດພົນລະເມືອງອາດຕິດຕາມເພື່ອຂໍຂໍ້ມູນທີ່ຂາດຫາຍໄປນັ້ນ ທັງທາງໂທລະສັບ ຫຼື ສົ່ງພະນັກງານຂອງສຳນັກງານໄປຫາທ່ານຢູ່ບ້ານ. ຖ້າທ່ານຕອບຄຳຖາມບໍ່ບໍ່ຄົບຫລືຂ້າມຄຳຖາມ ສຳນັກງານສຳຫຼວດພົນລະເມືອງກໍ່ຈະຕິດຕາມໜ້ອຍລົງ.

*ທ່ານສາມາດຫາຂໍ້ມູນເພີ່ມເຕີ່ມກ່ຽວກັບການສຳຫຼວດສຳມະໂນຄົວໄດ້ທີ່ www.CountUsIn2020.org/resources.*